ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ແຂວງອັດຕະປື

ເລກທີ 12.../ຈຂ,ອປ

ອັດຕະປື, ວັນທີ 02.ຕ.ລ.2017

# ຄຳສັ່ງ

## ວ່າດ້ວຍການ ຍຸດຕິການເກັບກູ້, ທ້ອນໂຮມ ແລະ ການຊື້-ຂາຍໄມ້ ເຄື່ອນຍ້າຍ, ການມີໄມ້ໃນຄອບຄອງ ແລະ ຂະບວນການສົມຮູ້ຮ່ວມຄິດທີ່ຜິດກົດໝາຍ

ເຖິງ: ພະແນກການ, ອົງການ ອ້ອມຂ້າງແຂວງ , ອົງການປົກຄອງເມືອງ 5 ຕົວເມືອງ ແລະ ອົງການຈັດຕັ້ງບ້ານ ອ້ອມຂ້າງເມືອງ.

- ອີງຕາມ ກົດໝາຍ ການປົກຄອງທ້ອງຖິ່ນ ແຫ່ງ ສປປ ລາວ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ໝວດທີ IV ມາດຕາ 20 ວ່າດ້ວຍສິດ ແລະ ໜ້າທີ່ ຂອງເຈົ້າແຂວງ.
- ອີງຕາມ ຄຳສັ່ງເລກທີ 15/ນຍ, ລົງວັນທີ 13/5/2016 ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ ແລະ ກວດກາ ການຂຸດຄົ້ນໄມ້, ການເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້.
- ອີງຕາມ ມະຕິກອງປະຊຸມຂອງຄະນະປະຈຳພັກແຂວງ ຮ່ວມກັບ ຄະນະກຳມະການ ປກຊ-ປກສ ຂັ້ນແຂວງ ຄັ້ງວັນທີ 5 ກັນຍາ 2017.

ໃນໄລຍະຜ່ານມາ ທາງແຂວງໄດ້ອອກຄຳສັ່ງແນະນຳ ສະບັບເລກທີ 606/ຈຂ.ອປ, ລົງວັນທີ 22/6/2016 ກ່ຽວກັບການຈັດຕັ້ງປະຕິບັດ ຄຳສັ່ງເລກທີ 15/ນຍ, ລົງວັນທີ 13 ພຶດສະພາ 2016 ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດ ໃນການຄຸ້ມຄອງ ແລະ ກວດກາການຂຸດຄົ້ນໄມ້, ເຄື່ອນຍ້າຍໄມ້ ແລະ ທຸລະກິດໄມ້. ຜ່ານການຈັດຕັ້ງເຄື່ອນໄຫວປະຕິບັດຄຳສັ່ງດັ່ງກ່າວມາຮອດປະຈຸບັນນີ້ ເຫັນວ່າ: ໄດ້ຮັບຜົນໜ້ອຍ, ພາກສ່ວນຂະແໜງການທີ່ກ່ຽວຂ້ອງຂອງລັດ ຍັງອ່ອນແອປະຕິບັດບໍ່ເຂັ້ມງວດເທົ່າທີ່ຄວນ, ຍັງມີຂະບວນການລັກລອບ ຊື້-ຂາຍ ໄມ້, ເຄື່ອນຍ້າຍໄມ້ ແລະ ມີໄມ້ໄວ້ໃນຄອບຄອງທີ່ຜິດກົດໝາຍ, ເກີດມີຫົ່ນແໜງຫຼາຍຂຶ້ນ ເຊິ່ງສ້າງຄວາມບໍ່ສະຫງົບພາຍໃນແຂວງ, ດັ່ງນັ້ນ ເພື່ອເປັນການຕ້ານ, ສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ດັ່ງກ່າວໃຫ້ໝົດໄປ ຕາມເນື້ອໃນຈິດໃຈຄຳສັ່ງເລກທີ 15/ນຍ ປະຕິບັດໃຫ້ປະຕິບັດຢ່າງເຂັ້ມງວດ ແລະ ປະກົດຜົນເປັນຈິງ.

### ເຈົ້າແຂວງອອກຄຳສັ່ງດັ່ງນີ້:

1. ດຳເນີນການກວາດລ້າງ, ເລີກຮື້ ແລະ ສະກັດກັ້ນ ຂະບວນການເກັບກູ້, ທ້ອນໂຮມ ແລະ ການຊື້-ຂາຍໄມ້, ເຄື່ອນຍ້າຍ, ການມີໄມ້ໃນຄອບຄອງ ແລະ ຂະບວນການສົມຮູ້ຮ່ວມຄິດ ທີ່ຜິດກົດໝາຍ; ໂດຍສະເພາະແມ່ນການແກ້ໄຂ ບັນດາໂຮງງານ ທີ່ບໍ່ໄດ້ມາດຕະຖານໃນການປຸງແຕ່ງ, ໂຮງຊອຍ, ໂຮງງານເຟີເນເຈີ ທີ່ບໍ່ໄດ້ຮັບອະນຸຍາດໃຫ້ຂາດຕົວ. ດຳເນີນຄະດີ ກັບ ໂຮງງານທີ່ສວຍໂອກາດ, ການແອບອ້າງບຸກຄົນ ແລະ ການຈັດຕັ້ງ, ໂຮງງານທີ່ເຄື່ອນໄຫວລັກລອບເກັບຊື້ໄມ້ເຂົ້າຜະລິດທີ່ຜິດກົດໝາຍ ຫຼື ບັນດາໂຮງງານທີ່ຖືກຍຸບກາຍເປັນບ່ອນຊຸກເຊື່ອງໄມ້ຂອງກຸ່ມ

ຄົນບໍ່ດີ;ກວາດລ້າງສະຖານທີ່ຈຸດທ້ອນໂຮມໄມ້ຖ່ອນທີ່ມີໃນ 5 ຕົວເມືອງ; ການມີໄມ້ໃນຄອບຄອງທີ່ຜິດກົດໝາຍຂອງປະຊາຊົນແຕ່ລະບ້ານ.

2. ມອບໃຫ້ ບັນດາທ່ານເຈົ້າເມືອງ 5 ຕົວເມືອງເປັນໃຈກາງໃນການຈັດຕັ້ງປະຕິບັດ, ພະແນກກະສິກຳ-ປ່າໄມ້ ແລະ ພະແນກການເງິນ, ພະແນກອຸດສະຫາກຳ ແລະ ການຄ້າ ແຕ່ງຕັ້ງພະນັກງານຂອງຕົນລົງສົມທົບໃນແຕ່ລະເມືອງ, ໃນນີ້ ໃຫ້ຈັດຕັ້ງເປັນ 2 ຄະນະຄື:

2.1. ຄະນະທີ 1: ກວດກາ ແລະ ຂຶ້ນບັນຊີໄມ້ປາກສາງຂາດຕົວ ຂອງແຕ່ລະໂຮງງານ ໃຫ້ສຳເລັດນັບແຕ່ມື້ອອກຄຳສັ່ງສະບັບນີ້ ຮອດວັນທີ 30/10/2017 ໃຫ້ສຳເລັດ; ຖ້າໂຮງງານໃດຫາກນຳເຂົ້າໄມ້ທີ່ບໍ່ຖືກຕ້ອງແມ່ນໃຫ້ດຳເນີນການແກ້ໄຂຕາມລະບຽບກົດໝາຍ.

2.2. ຄະນະທີ 2: ສືບຕໍ່ກວດກາ ແລະ ຍຸດຕິການດຳເນີນຈິດຈະການໂຮງເລື່ອຍ, ໂຮງຊອຍ, ໂຮງເຟີເນເຈີ ທີ່ບໍ່ໄດ້ຮັບອະນຸຍາດ, ວຽກນີ້ໃຫ້ສຳເລັດ ໃນວັນທີ 30/11/2017. ໃຫ້ເຈົ້າເມືອງອອກແຈ້ງການ ແລະ ເຜີຍແຜ່, ຊີ້ແຈງ ທັງສຶກສາອົບຮົມ ໃຫ້ປະຊາຊົນ, ພະນັກງານ, ທະຫານ, ຕຳຫຼວດ, ຊາວຕ່າງດ້າວ, ຊາວຕ່າງປະເທດ ແລະ ຜູ້ປະກອບການອື່ນໆໃນຂອບເຂດເມືອງຂອງຕົນຊາບວ່າ: ນັບແຕ່ວັນທີ 1-31/12/2017 ເມືອງຈະໄດ້ລົງກວດລ້າງການມີຊັບພະຍາກອນໄມ້ໄວ້ໃນຄອບຄອງ(ໄມ້ຕັບ,ໄມ້ທ່ອນປະເພດຕ່າງໆ), ລວມທັງແຮ່ທາດເຊັ່ນ: ຫີນປະໂກໄດ ຫຼື ອື່ນໆ. ຖ້າກວດກາເຫັນວ່າ ຜິດກົດໝາຍ ແມ່ນຈະຖືກຍຶດເປັນຂອງລັດ ພ້ອມທັງດຳເນີນຄະດີ.

3. ຂຶ້ນບັນຊີເປົ້າໝາຍ ແລະ ດຳເນີນຄະດີ ຕໍ່ບຸກຄົນ,ການຈັດຕັ້ງ,ກຸ່ມຄົນກະທຳຜິດ,ຜູ້ສົມຮູ້ຮ່ວມຄິດ ລະຫວ່າງພະນັກງານຂອງລັດທີ່ມີສ່ວນກ່ຽວພັນກັນ ກັບ ຂະບວນການ ໃຫ້ບໍລິການ, ໃຫ້ຄວາມສະດວກ ໃນການລັກລອບຊື້-ຂາຍໄມ້, ເຄື່ອນຍ້າຍໄມ້, ຫີນ ແລະ ອື່ນໆມີໄວ້ໃນຄອບຄອງທີ່ຜິດກົດໝາຍ.

4. ມອບໃຫ້ຫ້ອງການ ປກຊ-ປກສ ປະສານງານ ແລະ ຕິດຕາມ ບັນດາເປົ້າໝາຍທີ່ກ່ຽວຂ້ອງ ນັບທັງສະຫຼຸບລາຍງານ ໃຫ້ຄະນະປະຈຳພັກແຂວງ, ເຈົ້າແຂວງ-ຮອງເຈົ້າແຂວງຮັບຊາບເພື່ອມີທິດຊີ້ນຳ.

- ມອບໃຫ້ຄະນະກວດກາພັກ-ພະແນກກວດກາລັດກວດກາຕິດຕາມການຈັດຕັ້ງປະຕິບັດວຽກງານໃນແຕ່ລະເມືອງ, ພ້ອມທັງສະເໜີວິທີແກ້ໄຂຖ້າເຫັນວ່າມີຄວາມຈຳເປັນ.

- ແຂວງຈະປະກອບງົບປະມານຈຳນວນໜຶ່ງເພື່ອສົມທົບໃຫ້ຄະນະດັ່ງກ່າວຕາມເຫັນວ່າສົມຄວນ.

5. ຄຳສັ່ງສະບັບນີ້ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ, ບັນດາຄຳສັ່ງ, ຂໍ້ຕົກລົງ, ແຈ້ງການຕ່າງໆທີ່ໄດ້ອອກໃນໄລຍະຜ່ານມາ ທີ່ມີເນື້ອໃນຂັດກັບຄຳສັ່ງສະບັບນີ້ລ້ວນແຕ່ຖືກຍົກເລີກ.

**ບ່ອນສົ່ງ:**

| | | |
|---|---|---|
| - | ຄະນະປະຈຳພັກແຂວງ ທ່ານ ລະ | 1 ສະບັບ. |
| - | ຄະນະ ກຳມະການ ປກຊ-ປກສ ທ່ານລະ | 1 ສະບັບ. |
| - | ກວດກາພັກ-ລັດ | 1 ສະບັບ. |
| - | ຫ້ອງວ່າການແຂວງ | 1 ສະບັບ. |
| - | ຫ້ອງການ ປກຊ-ປກສແຂວງ | 1 ສະບັບ. |
| - | ພະແນກອຸດສະຫາກຳ ແລະ ການຄ້າແຂວງ | 1 ສະບັບ. |
| - | ພະແນກການເງິນແຂວງ | 1 ສະບັບ. |
| - | ພະແນກກະສິກຳ -ປ່າໄມ້ແຂວງ | 1 ສະບັບ. |
| - | ຫ້ອງວ່າການປົກຄອງເມືອງ ເມືອງລະ | 1 ສະບັບ. |
| - | ເກັບມ້ຽນ | 1 ສະບັບ. |

**ເຈົ້າແຂວງ**

ແຂວງອັດຕະປື

ເຈົ້າແຂວງແຂວງອັດຕະປື

ປອ ນາມ ວິຍະເກດ